# ຂໍ້ແນະນຳການຈັດກອງປະຊຸມປະຈຳເດືອນ
# ສຳລັບຜູ້ປະສານງານກຸ່ມບ້ານ

## 1) ຈຸດປະສົງ

- ເພື່ອທົບທວນ ການເຄື່ອນໄຫວວຽກງານຂອງຜູ້ປະສານງານກຸ່ມບ້ານ ຢູ່ແຕ່ລະກຸ່ມ ໃນໄລຍະ 1 ເດືອນຜ່ານມາ
- ເພື່ອລາຍງານສະພາບການເຄື່ອນໄຫວ ກົນໄກສະແດງຄຳຄິດເຫັນ ແລະ ແກ້ໄຂບັນຫາ (ກສກ)
- ເພື່ອເປີດໂອກາດໃຫ້ຜູ້ປະສານງານຈາກແຕ່ລະກຸ່ມບ້ານ ໄດ້ແລກປ່ຽນບົດຮຽນເຊິ່ງກັນແລະກັນ
- ເພື່ອຝຶກອົບຮົມຄືນ ໃຫ້ແກ່ຜູ້ປະສານງານກຸ່ມບ້ານ ພາຍໃຕ້ຫົວຂໍ້ໃດນຶ່ງ ທີ່ເຫັນວ່າມີຄວາມຈຳເປັນສຳລັບເຂົາເຈົ້າ ພາຍຫລັງທີ່ມີການປະເມີນຄວາມສາມາດຂອງເຂົາເຈົ້າ

## 2) ລະດັບຄາດໝາຍ

- ຜູ້ປະສານງານກຸ່ມບ້ານມີຄວາມເຂັ້ມແຂງ ແລະ ກາຍເປັນຜູ້ອຳນວຍຄວາມສະດວກທີ່ດີ ໂດຍສະເພາະການຊຸກຍູ້ ແລະ ແນະນາ ການຈັດຕັ້ງປະຕິບັດວຽກງານ ທລຍ ຢູ່ແຕ່ລະກຸ່ມບ້ານ
- ທລຍ ສາມາດກຳໄດ້ສະພາບການຈັດຕັ້ງປະຕິບັດວຽກງານ ກສກ ໂດຍຜ່ານການລາຍງານຂອງຜູ້ປະສານງານກຸ່ມບ້ານ
- ຜູ້ປະສານງານກຸ່ມບ້ານ ຈະມີຄວາມເຂົ້າໃຈ  ແລະ ຮັບຮູ້ພາລະບົດບາດຂອງຕົນຫລາຍຂຶ້ນ

## 3) ຜູ້ເຂົ້າຮ່ວມ

- ຜູ້ປະສານງານກຸ່ມບ້ານທັງໝົດໃນເມືອງ
- ຕາງໜ້າຫ້ອງການພັດທະນາຊົນນະບົດເມືອງ

## 4) ຜູ້ດຳເນີນ

- ພະນັກງານພັດທະນາຊຸມຊົນເມືອງ
- ບາງເດືອນ (ໂດຍສະເພາະເດືອນໃດ ທີ່ຕ້ອງການອະທິບາຍ/ແນະນຳ ກ່ຽວກັບວຽກວິຊາການ ແລະ ວຽກງານເງິນ - ຈັດຊື້ຈັດຈ້າງ) ຈຳເປັນຕ້ອງໄດ້ເຊີນເອົາພາກສ່ວນທີ່ກ່ຽວຂ້ອງມາຊ່ວຍ ໃນການເປັນ ຄູຝຶກ

5) ກຳນົດເວລາ

- 1 ມື້
- ກຳນົດເອົາອາທິດສຸດທ້າຍຂອງທຸກໆເດືອນ ຫລື ຕາມຄວາມເໝາະສົມ (ທຸກໆເດືອນຂອງຊ່ວງໄລຍະ ການຈັດຕັ້ງ ປະຕິບັດໂຄງການຍ່ອຍ ຫຼື ເລີ່ມແຕ່ເດືອນມັງກອນ ມີນາ, ເມສາ ແລະ  ພຶດສະພາ)

6) ສະຖານທີ່

- ຫ້ອງການ ທລຍ ເມືອງ

7) ເນື້ອໃນ ແລະ ຂັ້ນຕອນໃນການດຳເນີນກອງປະຊຸມ

- ນຳສະເໜີຈຸດປະສົງ ແລະ ລະບຽບວາລະຂອງກອງປະຊຸມປະຈຳເດືອນ
- ຜູ້ປະສານງານກຸ່ມບ້ານ ລາຍງານການເຄື່ອນໄຫວວຽກງານ ທລຍ ພາຍໃນກຸ່ມບ້ານຂອງຕົນ ໃນໄລຍະ 1 ເດືອນຜ່ານມາ. ໃນນັ້ນໃຫ້ກວາມເອົາ ການກະຈາຍຂໍ້ມູນ-ຂ່າວສານ ຢູ່ກະດານຂ່າວຂອງກຸ່ມບ້ານ ແລະ ການເຄື່ອນໄຫວກົນໄກສະແດງຄຳຄິດຄຳເຫັນ
- ປຶກສາຫາລື ແລະ ແກ້ໄຂບັນຫາ ທີ່ເກີດຂຶ້ນໃນໄລຍະຜ່ານມາ
- ຝຶກອົບຮົມ 1-2 ຫົວຂໍ້ (ຫົວຂໍ້ຝຶກອົບຮົມອາດຈະຄືກັນໃນຂອບຂອບເຂດທົ່ວປະເທດ ໃນກໍລະນີກຳນົດ ໂດຍ ທລຍ ສູນກາງ, ແຕ່ບາງເທື່ອອາດຈະບໍ່ຄືກັນ  ທັງນີ້ຂຶ້ນກັບການປະເມີນ ຄວາມຮູ້ຄວາມສາມາດ ຂອງຜູ້ປະສານງານກຸ່ມບ້ານຢູ່ໃນແຕ່ລະເມືອງ), ແຕ່ໃຫ້ແມ່ນຫົວຂໍ້ທີ່ເຫັນວ່າມີ ຄວາມຈຳເປັນ ຫຼື ເຫັນວ່າຜູ້ປະສານງານກຸ່ມບ້ານຂອງຕົນ ຍັງບໍ່ທັນມີຄວາມເຂົ້າໃຈຢ່າງເລິກ ເຊິ່ງ
- ນຳສະເໜີແຜນການເຄື່ອນໄຫວ ວຽກງານ ທລຍ ປະຈຳເດືອນຕໍ່ໄປ ຢູ່ໃນກຸ່ມບ້ານຂອງຕົນ

8) ອຸປະກອນ ເຄື່ອງມື

- ບົດລາຍງານຫຍໍ້ ກ່ຽວກັບການເຄື່ອນໄຫວວຽກງານ ທລຍ ຢູ່ແຕ່ລະກຸ່ມບ້ານ
- ເຄື່ອງມື IEC ເຊັ່ນ: ແຜ່ນໂປສະເຕີຕ່າງໆ ເພື່ອເປັນການທົບທວນຄືນ

9) ອຸປະກອນຮັບໃຊ້

| ລາຍການ | ລາຍລະອຽດ | ຈຳນວນ |
|---|---|---|
| <u>ແບບຟອມ</u> | ແບບຟອມ (PDKV_MT) | 1 |
| | ແບບຟອມເບີກຈ່າຍເບັ້ຽລ້ຽງ | 1 |
| <u>ເອກະສານອ້າງອີງ</u> | ບົດລາຍງານຫຍໍ້ ຂອງຜູ້ປະສານງານກຸ່ມບ້ານກ່ຽວກັບ ກິດຈະກຳທີ່ຕົນເອງເຄື່ອນໄຫວ | 1 |

| | | |
|---|---|---|
| <u>ອຸປະກອນຮັບໃຊ້</u> | ເຈັ້ຽແຜ່ນໃຫ່ຍ | 5 |
| | ປີກເຟີດຂຽນເຈັ້ຽ | 2 |
| | ສະກ໊ອດຕິດເຈັ້ຽ | 1 |
| | ເຄື່ອງມື IEC ເຊັ່ນ: ແຜ່ນໂປສະເຕີຕ່າງໆ ເພື່ອເປັນການທົບທວນຄືນ | 1 |

## 10. ໜ້າວຽກ ທີ່ຈະຕ້ອງໄດ້ກະກຽມ ກ່ອນຈັດກອງປະຊຸມ

| <u>ລາຍການໜ້າວຽກ</u> | <u>ພາກສ່ວນຮັບຜິດຊອບ</u> |
|---|---|
| ກະກຽມຕາຕະລາງດໍາເນີນກອງປະຊຸມ ແລະ ເນື້ອໃນຂອງການຝຶກອົບຮົມໃຫ້ແກ່ຜູ້ປະ ສານງານກຸ່ມບ້ານ ເພື່ອສົ່ງໃຫ້ ພັດທະນາຊຸມຊົນແຂວງຮັບຮອງ | ພັດທະນາຊຸມຊົນເມືອງ |
| ສ້າງແຜນງົບປະມານ ການຈັດກອງປະຊຸມປະຈໍາເດືອນ | ພັດທະນາຊຸມຊົນເມືອງ |
| ສົ່ງແຈ້ງການເຊີນຜູ້ປະສານງານກຸ່ມບ້ານ | ພັດທະນາຊຸມຊົນເມືອງ |
| ກະກຽມສະຖານທີ່ ແລະ ອອປະກອນກອງປະຊຸມ | ພັດທະນາຊຸມຊົນເມືອງ |